SPA Brochure_HPH_Lao.pdf 1 22-Jan-20 3:30:22 PM

# ວັງສະຫງວນ

**ວັງສະຫງວນ ຢູ່ຕາມສາຍນ້ຳລຳຫ້ວຍພາຍໃນ ແຂວງຫົວພັນແມ່ນໄດ້ກາຍເປັນຍຸດທະສາດທີ່ໄດ້ຮັບຜົນດີ ໂດຍການເຂົ້າຮ່ວມຂອງຊຸມຊົນໃນທ້ອງຖິ່ນເພື່ອຮັບປະກັນໃຫ້ປະຊາກອນປາຊະນິດພັນຕ່າງໆໃຫ້ມີຄວາມອຸດົມສົມບູນຫລາຍຂຶ້ນ. ວັງສະຫງວນ ຍັງເປັນພື້ນຖານທີ່ຕອບສະໜອງທາງດ້ານສະບຽງອາຫານໃຫ້ປະຊາຊົນໄດ້ບໍລິໂພກປາຫລາຍຂຶ້ນ ແລະ ມີລາຍຮັບເພີ່ມຂຶ້ນຈາກການຂາຍປາ. ວັງສະຫງວນຍັງຊ່ວຍໃນການອະນຸລັກດິນແຄມຕາຝັ່ງລວມທັງການທ່ອງທ່ຽວ.**

## ການຂະຫຍາຍ ແລະ ຜົນກະທົບ

- ວັງສະຫງວນ ໄດ້ສ້າງຕັ້ງຂຶ້ນຢູ່ 141 ບ້ານ ຂອງ 10 ເມືອງ ໃນທົ່ວແຂວງ.
- ໄດ້ສ້າງວັງສະຫວນ ຈຳນວນ 160 ວັງ ຢູ່ຕາມ 37 ສາຍນ້ຳລຳຫ້ວຍ.
- ວັງສະຫງວນ ເປັນແຫລ່ງສະໜອງຊີ້ນປາໃຫ້ແກ່ປະຊາຊົນຫລາຍກ່ວາ 14,000 ຄົນ ຂອງ 5,600 ຄອບຄົວ ໃນຊົນນະບົດ.
- ຊຸມຊົນທີ່ຢູ່ອ້ອມຂ້າງວັງສະຫງວນ ຫາປາໄດ້ຈຳນວນ 15,000 ກິໂລ ຕໍ່ ໜຶ່ງປີ ແລະ ຫາໄດ້ຫລາຍກ່ວາ 30 ຊະນິດ.
- ບາງຄອບຄົວມີລາຍຮັບຈາກການຫາປາ ເຖິງ 1,000,000 ກີບ ຕໍ່ ໜຶ່ງປີ.

## ໂອກາດ

- ຂະຫຍາຍຈຳນວນວັງສະຫງວນ ໃຫ້ເພີ່ມຂຶ້ນຕື່ມຕາມສາຍນ້ຳລຳຫ້ວຍພາຍໃນແຂວງ.
- ຂະຫຍາຍຂອບເຂດວັງສະຫງວນອອກ ໃຫ້ກວມເອົາລະບົບນິເວດຕາມແຄມນ້ຳ ທີ່ຢູ່ຕິດພັນກັບຫ້ວຍນ້ຳວັງສະຫງວນ.
- ອຳນວຍຄວາມສະດວກດ້ານການທ່ອງທ່ຽວ ດ້ວຍການສ້າງ ຮ້ານອາຫານ, ຂາຍອາຫານປາ, ພືດຜັກ ແລະ ເຄື່ອງຫັດຖະກຳທ້ອງຖິ່ນ ເພື່ອເພີ່ມລາຍຮັບໃຫ້ແກ່ຊຸມຊົນ.
- ວັງສະຫງວນ ເປັນທ່າແຮງທີ່ສຳຄັນໃນການຊ່ວຍ ກະຕຸ້ນ ເພື່ອຫລຸດຜ່ອນການນຳໃຊ້ຢາເຄມີປາບສັດຕູພືດ ແລະ ຢາຂ້າຫຍ້າ ໃນເຂດດິນກະສິກຳເນີນສູງ.
- ຍົກລະດັບທັດສະນະວິໄສ ແລະ ຄວາມຮັບຮູ້ ກ່ຽວກັບ ວັງສະຫງວນ ໂດຍວິທີການແຈກຢາຍແຜ່ນພັບ, ໂປດສະເຕີ ແລະ ຕິດປ້າຍໃຫ້ຢູ່ໃກ້ກັບເຂດບໍລິເວນພື້ນທີ່ວັງສະຫງວນ.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

## ກິດຈະກຳບູລິມະສິດເພີ່ມເຕີມທີ່ແຂວງ ພະຍາຍາມໃຫ້ການສະໜັບສະໜູນສິ່ງເສີມ:

- **ການລ້ຽງເຜີ້ງ:** ຈະສາມາດບັນລຸ ກາຍເປັນທ່າແຮງທີ່ສຳຄັນ ສຳລັບນ້ຳເຜີ້ງຂອງລາວໄດ້ຖ້າຫາກມີການຕະຫລາດ, ມີການຄວບຄຸມຄຸນນະພາບ ແລະ ມີຂະຫຍາຍການລ້ຽງເຜີ້ງ.
- **ໝາກກ້ອຍພື້ນເມືອງ:** ໝາກກ້ອຍພື້ນເມືອງມີວິທີການປຸງແຕ່ງສ້າງມູນຄ່າເພີ່ມໄດ້ຫລາຍແນວທີ່ເປັນໂອກາດ ແລະ ຊາວກະສິກອນ ຍັງຕ້ອງໄດ້ພາກັນເຮັດກິດຈະກຳການປຸງແຕ່ງ ແລະ ຂະຫຍາຍການຜະລິດອອກຕື່ມ.
- **ຫລັກສູດການສຶກສາດ້ານຊີວະນາໆພັນກະສິກຳ:** ຂະຫຍາຍຈຳນວນໂຮງຮຽນທີ່ເຮັດການຮຽນການສອນຕາມຫລັກສູດຊີວະນາໆພັນກະສິກຳ, ລວມທັງ ຢູ່ໃນ ສະຖາບັນການສຶກສານອກລະບົບ ແລະ ໃຫ້ການຊ່ວຍເຫລືອດ້ານເຄື່ອງມືຕື່ມໃຫ້ແກ່ໂຮງຮຽນຕາມຄວາມຕ້ອງການ.
- **ຊາປ່າ:** ຕົ້ນຊາດັ້ງເດີມ ເປັນແຫລ່ງ ສຳຫລັບ ຂະຫຍາຍການຜະລິດຊາ ແຕ່ຍັງຕ້ອງໄດ້ປົກປັກຮັກສາ, ແລະ ຕ້ອງໄດ້ໃຫ້ການຊ່ວຍເຫລືອດ້ານການຈັດຕັ້ງກຸ່ມ ແລະ ການຕະຫລາດທີ່ເປັນເອກະພາບ.
- **ການລ້ຽງປາໃນນາເຂົ້າ:** ເປັນກິດຈະກຳສືບທອດກັນມາແຕ່ບູຮານນະການໃນຂົງເຂດອາຊີ ແລະ ໃນບາງທ້ອງຖິ່ນຂອງປະເທດລາວ. ຢາກໃຫ້ການຜະລິດປາເພີ່ມຂຶ້ນ ກໍ່ສາມາດເຮັດໄດ້ໂດຍການນຳໃຊ້ວິທີການປະຕິບັດຢູ່ໃນປະເທດອື່ນໃນເຂດອາຊີ ແລະ ສາມາດເຮັດໄດ້ຮ່ວມກັບລະບົບການຄວບຄຸມສັດຕູພືດແບບປະສົມປະສານ(IPM)ໃນການປູກເຂົ້າ.
- **ການປ້ອງກັນໄຟໄໝ້ລາມປ່າ:** ສາມາດປ້ອງກັນໄຟໄໝ້ລາມປ່າໄດ້ໂດຍວິທີການໃຫ້ຊຸມຊົນສ້າງແລວປ້ອງກັນໄຟໄປຕາມພູມສັນຖານຕ່າງໆ.

**ຂໍ້ມູນເພີ່ມເຕີມ**

- ພະແນກກະສິກຳ ແລະ ປ່າໄມ້ແຂວງ
- ພະແນກສຶກສາທິການ ແລະ ກິລາ
- ພະແນກອຸດສະຫະກຳ ແລະ ການຄ້າ

ພາເຂົ້າລາວ
Pha•Khao•Lao
www.phakhaolao.la




# ແຂວງຫົວພັນ
# Houaphanh Province

## ສ້າງຄວາມເຂັ້ມແຂງດ້ານຊີວະນາໆພັນ
## Strengthening Agro-Biodiversity

ພົນລະເມືອງ 303,021ຄົນ, ແມ່ຍິງ 49% ຄົນ
50,870 ຄອບຄົວ
9 ຊົນເຜົ່າ
10 ເມືອງ
ເນື້ອທີ່ປ່າປົກຫຸ້ມ 58%
ເນື້ອທີ່ດິນປູກຝັງ 33%
85% ຂອງພົນລະເມືອງເປັນຊາວກະສິກອນ

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
National Agriculture and Forestry Research Institute

SPA Brochure_HPH_Lao.pdf 2 22-Jan-20 3:30:32 PM

# ໝາກກ້ຽງພື້ນເມືອງ

**ໝາກກ້ຽງພື້ນເມືອງຢູ່ແຂວງຫົວພັນ ເອີ້ນວ່າ ໝາກແປ້ນ ແລະ ໝາກຈອມແມ່ນມີຄວາມຕ້ອງການສູງ ຍ້ອນວ່າມັນເປັນທີ່ນິຍົມຊົມຊອບຂອງຜູ້ບໍລິໂພກທັງຫຼາຍເພາະວ່າມັນມີລົດຊາດສົ້ມຫວານປົນກັນ. ມີໂອກາດໃນການຜັນຂະຫຍາຍຜົນປະໂຫຍດເພື່ອຕອບສະໜອງຄວາມຕ້ອງການດັ່ງກ່າວ ໂດຍການແນະນຳວິທີການປູກໃຫ້ມີຄຸນນະພາບສູງຂຶ້ນ, ປັບປຸງການຄຸ້ມຄອງບົວລະບັດຮັກສາ, ສຸມໃສ່ພັດທະນາທາງດ້ານການຕະຫຼາດ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຊາວສວນປູກໝາກກ້ຽງ.**

## ການຜະລິດ

- ໄດ້ມີການປູກໝາກແປ້ນ ແລະ ໝາກຈອມ ຢູ່ໃນ 10 ບ້ານ ຂອງ 2 ເມືອງ ໃນ ແຂວງຫົວພັນ.
- ມີ 78 ຄອບຄົວ ທີ່ໄດ້ເຮັດ ການປູກໝາກແປ້ນ ແລະ ໝາກຈອມ.
- ສ້າງລາຍຮັບຈາກການຂາຍສະເລ່ຍໄດ້ 4,000,000 ກີບ ຕໍ່ໜຶ່ງຄອບຄົວ ຕໍ່ໜຶ່ງປີ.
- ຜົນຜະລິດໄດ້ປະມານ 50 ໂຕນ, ຈາກເນື້ອທີ່ສວນປູກ 36 ເຮັກຕາ.
- ມີສວນກ້າຂອງເອກະຊົນ 6 ແຫ່ງ ແລະ ຂອງລັດ 2 ແຫ່ງ, ຜະລິດເບ້ຍໝາກກ້ຽງທີ່ມີຄຸນນະພາບສູງ ຢູ່ໃນເມືອງກ້ອນ ແລະ ເມືອງຊຳເໜືອ.
- ປະລິມານ ແລະ ຄຸນນະພາບ ໃນການຜະລິດໝາກກ້ຽງ ແມ່ນຍັງພົບເຫັນກັບບັນຫາພະຍາດ, ແມງໄມ້ ແລະ ການບົວລະບັດຮັກສາຄຸ້ມຄອງທີ່ຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ.

## ການຕະຫລາດ

- ຕະຫລາດຈຳໜ່າຍ ໝາກແປ້ນ ແລະ ໝາກຈອມ ແມ່ນມີຢູ່ທົ່ວໄປ.
- ໂດຍລວມແລ້ວມີພໍ່ຄ້າທ້ອງຖິ່ນ 6 ຄົນ ທີ່ເປັນຜູ້ເກັບຊື້ອອກຈາກສວນ ແລະ ຍັງມີອີກ 2 ຄົນທີ່ມາຈາກແຂວງຊຽງຂວາງ ແລະ ປະເທດຫວຽດນາມ.
- ຊາວກະສິກອນ ໄດ້ຂາຍຍົກເປັນຕົ້ນຕໍ ແລະ ຍັງມີຈຸດຂາຍອີກ 5 ຈຸດຢູ່ຕາມແຄມທາງຫລວງ, ການຂາຍຍົກໂດຍກົງຈາກສວນ ແລະ ຂາຍຢູ່ຕະຫລາດທ້ອງຖິ່ນ ຖືເປັນຍຸດທະສາດການຂາຍທີ່ສຳຄັນທີ່ຊາວກະສິກອນຍັງປະຕິບັດສືບຕໍ່ກັນມາ.
- ຍຸດທະສາດການຕະຫລາດ ແມ່ນຕ້ອງໄດ້ເພີ່ມການເອົາໃຈໃສ່ ກ່ຽວກັບ ການຜະລິດອິນຊີ, ຄຸນນະພາບ ແລະ ການຫຸ້ມຫໍ່.
- ການຂາຍຢູ່ໃນສວນໃນໄລຍະ 5 ປີ ທີ່ຜ່ານມາ ແມ່ນລາຄາ 3,500-6,000 ກີບ ຕໍ່ ກິໂລ ສ່ວນ ການຂາຍຍ່ອຍ ແມ່ນລາຄາ 8,000-15,000 ກີບ ຕໍ່ ກິໂລ.

## ໂອກາດ

- ຍົກລະດັບຄຸນນະພາບ ການຜະລິດໝາກກ້ຽງ ໂດຍວິທີການຄຸ້ມຄອງບົວລະບັດຮັກສາ ຕັດແຕ່ງກິ່ງງ່າເປັນປະຈຳໃນແຕ່ລະປີ ແລະ ເພີ່ມການນຳໃຊ້ນ້ຳຊົນລະປະທານ ແລະ ການໃສ່ຝຸ່ນຕ່າງໆ.
- ຕັດຕົ້ນທີ່ເປັນພະຍາດອອກ ປູກຕົ້ນທີ່ມີຄຸນນະພາບດີໃສ່ແທນ ລວມທັງ ການປູກ ຫົວດຸກເດື່ອ ແລະ ໝາກສາມສິບໃສ່ແບບປະສົມປະສານ.
- ຂະຫຍາຍເນື້ອທີ່ການຜະລິດໝາກກ້ຽງ.
- ປູກໝາກກ້ຽງແນວພັນອື່ນໃສ່ນຳຕື່ມ ລວມທັງ ເຮັດການລ້ຽງເຜິ້ງ ແລະ ລ້ຽງໄກ່ ຢູ່ໃນພື້ນທີ່ສວນ ເພື່ອເປັນການປ້ອງກັນ ແລະ ຄວບຄຸມສັດຕູພືດແບບປະສົມປະສານ.
- ສ້າງຍຸດທະສາດການຕະຫລາດ, ສຸມໃສ່ເຮັດການຜະລິດຄຸນນະພາບແບບອິນຊີ ແລະ ການຫຸ້ມຫໍ່ຕ່າງໆ ໃຫ້ດີຂຶ້ນ.
- ສ້າງປ້າຍໂຄສະນາ ດ້ວຍການລະບຸ ສະຖານທີ່ສວນປູກໝາກກ້ຽງ, ເຈົ້າຂອງສວນ ຫລື ຜູ້ຕິດຕໍ່ຊື້-ຂາຍໝາກກ້ຽງ.



# ເຂົ້າໄກ່ນ້ອຍ

**ເຂົ້າໄກ່ນ້ອຍ ເປັນແນວພັນເຂົ້າພື້ນເມືອງມີທັງໝົດ 6 ສາຍພັນ ເໝາະສົມກັບສະພາບແວດລ້ອມຂອງແຂວງຫົວພັນ. ເຂົ້າໄກ່ນ້ອຍເປັນທີ່ຮູ້ຈັກດີຍ້ອນມີລົດຊາດ ແລະ ກິ່ນຫອມສະເພາະຕົວຂອງມັນ ແລະ ຄວາມຕ້ອງການເຂົ້າໄກ່ນ້ອຍນັບມື້ນັບເພີ່ມຂຶ້ນ. ເປັນພືດທີ່ຜະລິດເປັນສິນຄ້າບູລິມະສິດໜຶ່ງຂອງແຂວງຫົວພັນ.**

## ການຜະລິດ

- ມີການປູກເຂົ້າໄກ່ນ້ອຍ 6 ສາຍພັນທີ່ມີຄວາມແຕກຕ່າງກັນໄປຕາມສີ,ລົດຊາດແລະຄວາມຫອມ.
- ເຂົ້າໄກ່ນ້ອຍໄດ້ປູກຢູ່ໃນ 6 ເມືອງຄື: ເມືອງຊຳເໜືອ, ເມືອງຮ້ຽມ, ເມືອງຊ່ອນ, ເມືອງຫົວເມືອງ, ເມືອງສິບບາວ ແລະ ເມືອງວຽງໄຊ.
- ປະຈຸບັນຢູ່ແຂວງຫົວພັນ ຜະລິດເຂົ້າໄກ່ນ້ອຍໄດ້ຈຳນວນ 27,000 ໂຕນ, ໃນເນື້ອທີ່ນາ 6,000 ເຮັກຕາ, ສະມັດຕະພາບສະເລ່ຍ 4.5 ໂຕນຕໍ່ ເຮັກຕາ.
- ປະຈຸບັນ ການຜະລິດເມັດແນວພັນເຂົ້າໄກ່ນ້ອຍທີ່ມີຄຸນນະພາບ ແມ່ນຢູ່ ສູນສົ່ງເສີມກະສິກຳ ແລະ ປ່າໄມ້ບ້ານອິ້ງຊີ່ງສາມາດຜະລິດ: ພັນບໍລິສຸດ (BS) 49 ກິໂລ, ພັນພື້ນຖານ(R1) 74 ກິໂລ ,ພັນຂຶ້ນທະບຽນ (R2) 75 ກິໂລ ແລະ ພັນຢັ້ງຢືນ (R3) 73 ກິໂລ ແລະ ປະຊາຊົນຜະລິດພັນຂຶ້ນທະບຽນ (R2) 1,700 ກິໂລ ແລະ ພັນຢັ້ງຢືນ (R3) 8,600 ກິໂລ.

## ການຕະຫລາດ

- ເຂົ້າໄກ່ນ້ອຍທີ່ຜະລິດ ໃນແຂວງຫົວພັນ ໄດ້ຂາຍອອກ 65%, ສ່ວນທີ່ເຫລືອແມ່ນບໍລິໂພກພາຍໃນຄອບຄົວຊາວກະສິກອນ.
- ມີພໍ່ຄ້າ-ແມ່ຄ້າທ້ອງຖິ່ນເປັນຈຳນວນຫລາຍທີ່ເຮັດການຊື້-ຂາຍເຂົ້າໄກ່ນ້ອຍຢູ່ພາຍໃນແຂວງ.
- ລາຄາຂາຍຍົກເຂົ້າໄກ່ນ້ອຍຢູ່ກັບທີ່ແມ່ນ 6,000-7,000 ກີບ/ກິໂລ, ສ່ວນລາຄາຂາຍຍ່ອຍແມ່ນ 8,000-10,000 ກີບ ຕໍ່ ກິໂລ.

## ໂອກາດ

- ມີໂຄງລ່າງພື້ນຖານທີ່ສະໜັບສະໜູນການຜະລິດເຂົ້າໄກ່ນ້ອຍແລ້ວ ເຊັ່ນ: ລະບົບຊົນລະປະທານຖາວອນ 170 ແຫ່ງ, ລະບົບຊົ່ວຄາວ 2,000 ແຫ່ງ, ລະບົບທໍ່ນ້ຳ 7 ແຫ່ງ, ອ່າງເກັບນ້ຳ 8 ແຫ່ງ ແລະ ກົງພັດນ້ຳເຂົ້ານາ 145 ໜ່ວຍ.
- ສະພາບດິນຟ້າອາກາດໃນ ແຂວງຫົວພັນ ແມ່ນມີຄວາມເອື້ອອຳນວຍເໝາະສົມຕໍ່ການຜະລິດເຂົ້າໄກ່ນ້ອຍ.
- ເຂົ້າໄກ່ນ້ອຍ ມີຄວາມທົນທານຕໍ່ກັບສະພາບດິນຟ້າອາກາດ, ມີຜົນຜະລິດສູງ, ມີກິ່ນຫອມ ແລະ ລາຄາສູງ.
- ເຂົ້າໄກ່ນ້ອຍມີຊື່ສຽງໂດ່ງດັງ ຍ້ອນມີຄວາມເປັນເອກະລັກສະເພາະທ້ອງຖິ່ນ, ເປັນຜະລິດຕະພັນອິນຊີ ແລະ ເປັນທີ່ນິຍົມຊົມຊອບ.
- ເຂົ້າໄກ່ນ້ອຍໄດ້ຮັບການຢັ້ງຢືນພູມສັນຖານ (GI) ແລ້ວ ເປັນໂອກາດດີເພື່ອຂະຫຍາຍການຕະຫລາດ.



# ໜໍ່ຫລອຍ

**ໜໍ່ຫລອຍ ແມ່ນຈັດຢູ່ໃນຕະກຸນໄມ້ປ່ອງ ທີ່ພົບເຫັນແບບກະແຈກກະຈາຍຢູ່ຕາມພື້ນທີ່ຕ່າງໆ ໃນແຂວງທາງພາກເໜືອ. ປະຊາຊົນທ້ອງຖິ່ນຮູ້ຈັກດີໃນລົດຊາດທີ່ເປັນເອກະລັກ, ຄົນພາຍໃນເທດສະບານແຂວງ ແລະ ນະຄອນຫລວງວຽງຈັນ ເລີ່ມມີຄວາມນິຍົມກັນບໍລິໂພກໜໍ່ຫລອຍຫລາຍຂຶ້ນ. ໜໍ່ຫລອຍມີເນື້ອບາງ ແລະ ທາງໃນມັນໂກນ ທີ່ແປກບໍ່ຄືກັບໜໍ່ໄມ້ຊະນິດອື່ນໆ, ລຳຂອງມັນຍັງໄດ້ນຳເອົາໄປເຮັດທໍ່ດູດນ້ຳດື່ມປ່ຽນແທນທໍ່ດູດຢາງຢູ່ໃນຮ້ານອາຫານໃຫຍ່ໆແລ້ວ. ໜໍ່ຫລອຍເກີດຫລາຍຢູ່ຕາມທຳມະຊາດ ແລະ ກໍ່ມີການສົ່ງເສີມໃຫ້ມີການປູກຂະຫຍາຍເພື່ອເປັນສິນຄ້າ.**

## ການຜະລິດ

- ໄດ້ມີ ປະຊາຊົນ 105 ຄອບຄົວ ປູກໜໍ່ຫລອຍ ໃນ 5 ບ້ານ ຂອງ ເມືອງຫົວເມືອງ.
- ຕົ້ນໜໍ່ຫລອຍ ຈະອອກໜໍ່ໃນລະຫວ່າງ ເດືອນ ສິງຫາ - ພະຈິກ ຂອງ ທຸກໆປີ.
- ປະຈຸບັນ ປະຊາຊົນໄດ້ມີສວນປູກໜໍ່ຫລອຍ ຈຳນວນ 20 ເຮັກຕາ ເພື່ອເປັນການເພີ່ມຜະລິດຕະພັນໜໍ່ຫລອຍໃຫ້ຫລາຍຂຶ້ນຕື່ມ.
- ກຸ່ມຊາວກະສິກອນ 5 ກຸ່ມ ຢູ່ພາຍໃນ 5 ບ້ານ ແມ່ນໄດ້ຮັບການຝຶກອົບຮົມດ້ານການປູກ ແລະ ຂະຫຍາຍໜໍ່ຫລອຍ.
- ການເກັບກູ້ໜໍ່ຫລອຍຈາກສວນປູກ ໄດ້ 69 ໂຕນ, ສະມັດຕະພາບສະເລ່ຍ 3.4 ໂຕນຕໍ່ເຮັກຕາ.
- ໄດ້ມີການກຳໜົດເນື້ອທີ່ດິນແລ້ວ 28 ເຮັກຕາ ເພື່ອເຮັດການປູກໜໍ່ຫລອຍ.
- ເຫັນວ່າ ຊຸມຊົນໃນບ້ານໃກ້ຄຽງກັນເລີ່ມມີການປູກ ແລະ ຂະຫຍາຍສວນປູກໜໍ່ຫລອຍ.

## ການຕະຫລາດ

- ການຕະຫລາດໜໍ່ຫລອຍ ແມ່ນຍັງບໍ່ທັນໄດ້ຮັບການພັດທະນາ ຮ່ວມກັບ ພໍ່ຄ້າ-ແມ່ຄ້າ ແລະ ຜູ້ເກັບຊື້ໃນທ້ອງຖິ່ນເທື່ອ, ມີແຕ່ການນຳເອົາໄປຂາຍເອງຢູ່ໃນຕະຫລາດທ້ອງຖິ່ນເທົ່ານັ້ນ.
- ການຂາຍໜໍ່ຫລອຍ ຕາມແຄມທາງ ໃນ 5 ບ້ານນັ້ນ ແມ່ນມີຄວາມສຳຄັນຕໍ່ການຂະຫຍາຍດ້ານການຕະຫຼາດ.
- ຊາວກະສິກອນ ແລະ ພໍ່ຄ້າບາງຄົນ ໄດ້ເຮັດການຫຸ້ມຫໍ່ ແລະ ສົ່ງອອກໄປຂາຍຢູ່ຕະຫລາດຫ່າງໄກ ໂດຍສະເພາະນະຄອນຫລວງວຽງຈັນ.
- ລາຄາໜໍ່ຫລອຍ ໃນຕະຫລາດ ແມ່ນຂຶ້ນລົງຢູ່ໃນລະຫວ່າງ 5,000 ຫາ 12,000 ກີບ ຕໍ່ ໜຶ່ງກິໂລ.

## ໂອກາດ

- ປະຈຸບັນການຜະລິດໜໍ່ຫລອຍ ຢູ່ພາຍໃນບ້ານຈຸດສຸມ ແລະ ຊຸມຊົນອ້ອມຂ້າງໄດ້ມີການຂະຫຍາຍເພີ້ມຂຶ້ນ.
- ສະໜັບສະໜູນດ້ານເຕັກນິກ ແລະ ຄວາມສາມາດໃນການຄັດເລືອກແນວພັນໃຫ້ແກ່ປະຊາຊົນບ້ານອື່ນ.
- ສ້າງແຜນການຂັ້ນບ້ານ ທີ່ກຳນົດລະອຽດ ກ່ຽວກັບ ຂອບເຂດພື້ນທີ່ປູກໜໍ່ຫລອຍແບບຄົງທີ່ ລວມທັງການອອກໃບຢັ້ງຢືນຄຸ້ມຄອງສິດນຳໃຊ້.
- ສ້າງຕະຫລາດໃໝ່ ແລະ ສ້າງຕ່ອງໂສ້ການຕະຫລາດກັບຜູ້ປະກອບການ.
- ໂຄສະນາ ການຜະລິດໜໍ່ຫລອຍ ໂດຍການຕິດປ້າຍບອກສະຖານທີ່, ເຮັດການຫຸ້ມຫໍ່ທີ່ດີ ແລະ ເຮັດການຮ່ວມມືກັບ ເມືອງ, ເທດສະບານແຂວງ ແລະ ຕະຫລາດຕາມແຄມທາງ.

